ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງຄະນະພັກມອບໃບຍັ້ງຢືນ
# ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2019




ໃນວັນທີ 26 ຕຸລາ 2020, ທີ່ສະໂມສອນ ສະຖາບັນການທະນາຄານ ໄດ້ຈັດພິທີມອບ-ຮັບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2019 ໂດຍພາຍໃຕ້ການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ; ພ້ອມນີ້ກໍ່ມີຄະນະປະຈຳພັກ, ຄະນະພັກ, ຄະນະພັກຮາກຖານພ້ອມດ້ວຍສະມາຊິກພັກ-ພະນັກງານຫຼັກແຫຼ່ງນຳພາເຂົ້າຮ່ວມຈຳນວນ 193 ສະຫາຍ.





ການມອບ - ຮັບໃບຍັ້ງຢືນໃນຄັ້ງນີ້ກໍ່ເພື່ອເປັນການຍັ້ງຢືນເຖິງຜົນງານການເຄື່ອນໄຫວຂອງບັນດາຮາກຖານພັກກ່ຽວຂ້ອງໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດແນວທາງແຜນນະໂຍບາຍຂອງພັກ. ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫ່ຍຄັ້ງທີ X ຂອງພັກ, ມະຕິກອງປະຊຸມໃຫ່ຍຄັ້ງທີ III ຂອງອົງຄະນະພັກ ທຫລ ແລະ ມະຕິກອງປະຊຸມໃຫ່ຍຮາກຖານພັກຕົນ, ຊຶ່ງມີຜົນສຳເລັດໃນຫຼາຍດ້ານ. ເຮັດໃຫ້ລະບົບທະນາຄານມີຄວາມເຕີບໃຫຍ່ຂະຫຍາຍຕົວຢ່າງແຂງແຮງ, ມີການຫັນປ່ຽນຢ່າງຕັ້ງໜ້າທາງດ້ານປະລິມານ-ຄຸນນະພາບ. ປະຈຸບັນອົງຄະນະພັກ ທຫລ ທັງໝົດມີ 52 ຮາກຖານພັກ (ມີ 20 ໜ່ວຍພັກເອກະລາດ ແລະ 5 ຄະນະພັກຮາກຖານທີ່ມີ 32 ໜ່ວຍພັກຂຶ້ນກັບ) ໃນນັ້ນ, ໄດ້ມີໜ່ວຍພັກທີ່ຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2019 ທັງໝົດ 23 ໜ່ວຍພັກກວມເອົາ 45%, ໜ່ວຍພັກກວມເອົາ 42% ແລະ ໜ່ວຍພັກກາງ 6 ໜ່ວຍພັກກວມເອົາ 12%.

ຄະນະພັກ ທຫລ ຕົກລົງຮັບຮອງຜົນການປະເມີນຕີລາຄາຄຸນນະພາບ ແລະ ແບ່ງປະເພດໜ່ວຍພັກ ປະຈຳປີ 2019 ຊຶ່ງມີໜ່ວຍພັກປະເພດ ປອດໃສ, ເຂັ້ມແຂງໜັກແໜ້ນ ມີ 23 ໜ່ວຍພັກຄື: ໜ່ວຍພັກຮາກຖານ ມີ 11 ໜ່ວຍພັກ; ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານມີ 12 ໜ່ວຍພັກ; ໜ່ວຍພັກປະເພດແຂງມີ 22 ໜ່ວຍພັກຄື: ໜ່ວຍພັກຮາກຖານມີ 6 ໜ່ວຍພັກ; ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານມີ 16 ໜ່ວຍພັກ; ໜ່ວຍພັກປະເພດກາງມີຈຳນວນ 6 ໜ່ວຍພັກຄື: ໜ່ວຍພັກເອກະລາດມີ 2 ໜ່ວຍພັກ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານມີ 4 ໜ່ວຍພັກ.

# **ຂ່າວ-ພາບ: ສົມພິດ ທຳມະວົງ**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**